# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 1 ມັງກອນ 2017 ( 1-1-2017 )

---

## ພຣະທັມຂອງພຣະເຈົ້າທັນກັບຍຸກສມັຍສເມີ

*ແນວໂນ້ມ ຫຼື ຣິດນິຍົມ ແນວໃດທີ່ເປັນບັນຫາໃຫຍ່ໃນຊີວິດທ່ານ ?*

**ຈຸດສຳຄັນໃນບົດຮຽນ**: ພຣະຄຳຂອງພຣະເຈົ້າ ສະທ້ອນໃຫ້ເຫັນພຣະລັກສະນະ ແລະຣິດອຳນາດຂອງພຣະອົງ ແລະຈະສະທ້ອນສເມີໄປ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:
ການລົດຄວາມອ້ວນແມ່ນຢູ່ອັນດັບສຸດຍອດໃນການຢາກປ່ຽນແປງໃນປີໃໝ່ແຕ່ລະປີ. ສິ່ງທີ່ບໍ່ໝັ້ນຄົງແມ່ນ ເຮົາຈະເຮັດຢ່າງໃດ ເພື່ອໃຫ້ບັນລຸເປົ້າໝາຍທີ່ຕັ້ງໄວ້ນັ້ນ.

- ປີ 1910 ເນັ້ນໜັກໃຫ້ຫຍໍ້າເຂົ້າ 32 ຄັ້ງຢ່າງໜ້ອຍເດືອນລະເທື່ອ.
- ປີ 1930 ໃຫ້ເຮົາກິນໝາກອະງຸ່ນ ລົດຄວາມອ້ວນ ຫຼືເຮັດແບບ(ດາຣາຮໍລີວູດ).
- ປີ 1970 ເລີ້ມປ່ຽນຄວາມຄິດໃໝ່ໃຫ້ກິນຢາລົດຄວາມອ້ວນ ທີ່ວາງຂາຍເທິງຕູ້ຕາມຮ້ານຂາຍຢາ.
- ປີ 1980 ແນະນຳວີດີໂອອອກກຳລັງກາຍ ໂດຍດາຣາດັງ ຈາກ Jane Fonda ຫາ Richard Simmonds.
- ປີ 1990 ໃຫ້ລົດຜ່ອນອາຫານທີ່ມີຄາໂບໄຮເດຣດ, ທີ່ມີໂປຣຕີນສູງ.

ໃຜຊິຮູ້ວ່າຈະມີຫຍັງຕໍ່ໄປອີກ? ຢາລົດຄວາມອ້ວນທີ່ນິຍົມກັນແມ່ນຂຶ້ນກັບສິ່ງທີ່ "ຜູ້ຊ່ຽວຊານ"ໄດ້ເວົ້າ ແລະກ່ຽວພັນກັບເຮົາ. ແຕ່ເຂົາກໍພຍາຍາມປ່ຽນເຕັມຂີດຄວາມສາມາດ ເທົ່າທີ່ເຂົາຈະເຮັດໄດ້.

ຊີວິດຂອງເຮົາຄວນຈະປູພື້ນຖານເທິງສິ່ງທີ່ຊັດເຈນກວ່າຄວາມນິຍົມຫຼ້າສຸດ. ເພງສັຣເສີນບົດ 119 ເລັງໃສ່ແຫຼ່ງດຽວທີ່ໝັ້ນຄົງສເມີ, ແລະຈະກ່ຽວພັນກັບເຮົາສເມີນັ້ນຄື: ພຣະທັມພຣະເຈົ້າ.

**ພຣະຄັມພີກ່າວວ່າແນວໃດ** : ເພງສັຣເສີນ 119: 89-96 (ເບິ່ງຕາມຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ເພງສັຣເສີນ 119:89-91</u>** :

89 *ຂ້າແດ່ພຣະຜູ້ເປັນເຈົ້າ ພຣະທັມຂອງພຣະອົງຊົງມີຢູ່ຕລອດໄປ ແລະຊົງໝັ້ນຄົງຢູ່ໃນສວັນຊັ້ນຟ້າ*
90 *ຄວາມສັດຊື່ຂອງພຣະອົງຊົງດຳລົງຢູ່ທຸກຍຸກທຸກສມັຍ ພຣະອົງຊົງຕັ້ງໂລກນີ້ໄວ້ໃນບ່ອນຂອງມັນແລະມັນກໍຍັງຕັ້ງຢູ່.*
91 *ຍ້ອນຂໍ້ຄຳສັ່ງຂອງພຣະອົງທຸກສິ່ງກໍຍັງຕັ້ງໝັ້ນຄົງຢູ່ຈົນເຖິງທຸກມື້ນີ້ເພາະທຸກສິ່ງນີ້ເປັນທາດຮັບໃຊ້ຂອງພຣະອົງ.*

| *ດົນປານໃດແລ້ວ ຕັ້ງແຕ່ທ່ານໄດ້ພົບພຣະຄັມພີໃນທາງທີ່ມີຄວາມໝາຍເຕັມປ່ຽມ ?* |
|---|

ມີພຽງສອງສິ່ງທີ່ຍັງຕັ້ງຢູ່ຫຼັງຈາກໂລກນີ້ຄື: ພຣະທັມພຣະເຈົ້າ ແລະ ວິນຍານຂອງຄົນທັງຫລາຍ. ຖ້າຢາກຢູ່ໃນສວັນນຳພຣະເຈົ້າ, ພວກເຮົາຕ້ອງມອບຖວາຍວິນຍານອັນຖາວອນຂອງເຮົາໃຫ້ພຣະເຈົ້າ ແລະໃຫ້ພຣະທັມອັນຖາວອນຂອງພຣະອົງ.

ຜູ້ຂຽນເພງສັຣເສີນຢືນຢັນ ສະພາບ "ອັນຕລອດໄປເປັນນິດ " (Forever) ຂອງພຣະທັມພຣະເຈົ້າ ໂດຍການປະ

ກາດວ່າພຣະທັມ (ຕັ້ງໝັ້ນຄົງ) (Firmly fixed). ໃນເມື່ອຫີນເສົາເອກຖືກວາງລົງ ໃນເວລາເລີ້ມໂຄງການກໍ່ສ້າງ ຫີນເຫຼົ່ານັ້ນກໍຕ້ອງຖືກວາງໄວ້ຢູ່ບ່ອນນັ້ນເລີຍ. ຖ້າຫີນເຫຼົ່ານັ້ນຖືກຍ້າຍອອກ, ຕຶກນັ້ນກໍຈະພັງທະລາຍລົງ. ພຣະທັມພຣະເຈົ້າເປັນສີລາຄໍ້າຊູຊີວິດເຮົາ. ພຣະທັມຖືກຝັງໄວ້ຢ່າງສົມບູນ ແລະໝັ້ນຄົງ. ນອກຈາກນັ້ນ ຜູ້ຂຽນພຣະທັມເພງສັຣເສີນບັນທຶກໄວ້ວ່າພຣະທັມພຣະເຈົ້າ "ຕັ້ງໝັ້ນຄົງຢູ່ໃນສວັນ". ພຣະທັມພຣະເຈົ້າເປັນເລີດ; ຢູ່ເໜືອ ແລະອ້ອມຮອບເຮົາ. ພຣະທັມບໍ່ມີຂອບເຂດຈຳກັດເໜືອກວ່າການຕໍ່ຕ້ານຈາກມະນຸສໂລກ ແລະການຕໍ່ຕ້ານຝ່າຍວິນຍານໃນຟ້າສະຖານ.

ພຣະຄັມພີບໍ່ແມ່ນປື້ມປະຈຳອາທິດ ຫຼືບໍ່ແມ່ນປື້ມປະຈຳປີ ແຕ່ແມ່ນປື້ມທຸກເຊັ່ນຄືນ ! ດັ່ງທີ່ຜູ້ປະກາດພຣະທັມເອຊາຢາ ເປີດເຜີຍວ່າ, *"ຫຍ້າກໍຫ່ຽວແຫ້ງ ດອກຂອງມັນກໍຮ່ວງໂຮຍໄປ, ແຕ່ພຣະທັມແຫ່ງພຣະເຈົ້າຂອງເຮົາຈະຕັ້ງໝັ້ນຄົງຢູ່ຕລອດໄປ". (ເອຊາຢາ 40:8).*

ຜູ້ຂຽນພຣະທັມເພງສັຣເສີນຢືນຢັນຄວາມສັດຊື່ຂອງພຣະເຈົ້າ ຊຶ່ງເຫັນໄດ້ຈາກການຊົງສ້າງ: " ພຣະອົງຊົງສ້າງໂລກໃຫ້ເກີດມີມາແລະຕັ້ງໝັ້ນຄົງຢູ່." ພຣະເຈົ້າສັ່ງໃຫ້ໂລກປາກົດຂຶ້ນແລະຍັງຕັ້ງໝັ້ນຄົງຢູ່ ພວກເຮົາຈຶ່ງສາມາດວາງໃຈທຸກສິ່ງພຣະເຈົ້າເວົ້າວ່າໃຫ້ຕັ້ງໝັ້ນຄົງຢູ່. ແຕ່ສວັນແລະແຜ່ນດິນໂລກບໍ່ໄດ້ຕັ້ງຢູ່ດ້ວຍຕົນເອງ ພຣະເຈົ້າຊົງເປັນຜູ້ຄໍ້າຊູໄວ້, *"ເພາະທຸກສິ່ງເປັນທາດຮັບໃຊ້ຂອງພຣະອົງ."* ພຣະເຈົ້າເປັນຜູ້ຄວບຄຸມ ແລະສິ່ງຊົງສ້າງໄດ້ຮັບໃຊ້ພຣະອົງ.

ນີ້ແມ່ນຄວາມໝັ້ນໃຈທີ່ເຮົາມີໃນພຣະຄຣິດແລະໃນພຣະທັມຂອງພຣະອົງ. ພຣະອົງເປັນຜູ້ຄວບຄຸມແລະພຣະທັມຂອງພຣະອົງກໍຢູ່ເໜືອກຳນົດເວລາ ແລະຊົງສັດຊື່.

***ເປັນຫຍັງຈຶ່ງສຳຄັນທີ່ຮູ້ວ່າພຣະທັມຂອງພຣະເຈົ້າບໍ່ປ່ຽນແປງ ?***

## 2. <u>ເພງສັຣເສີນ 119:92-93</u>:

*92 "ຫາກວ່າພຣະທັຍຂອງພຣະອົງບໍ່ເປັນບໍ່ເກີດແຫ່ງຄວາມຍິນດີຂອງຂ້ານ້ອຍແລ້ວ ຂ້ານ້ອຍຈະຕ້ອງຕາຍໃນການລົງໂທດນີ້. 93 ຂ້ານ້ອຍຈະບໍ່ລະເລີຍຕໍ່ກົດຣະບຽບຂອງພຣະອົງຈັກເທື່ອ ເພາະຍ້ອນສິ່ງເຫຼົ່ານີ້ພຣະອົງໄດ້ຊ່ອຍໃຫ້ຂ້ານ້ອຍມີຊີວິດຢູ່."*

ຕໍ່ໄປຜູ້ຂຽນເພງສັຣເສີນ ໄດ້ເບິ່ງຢ່າງຄັກແນ່ເຖິງຄວາມສັດຊື່ຂອງພຣະທັມພຣະເຈົ້າ ເພື່ອຊ່ອຍເຮົາໃນຄາວຍາກລຳບາກຂອງເຮົາ. ຊຶ່ງໄດ້ວາງມາຕະຖານໄວ້ວ່າພຣະທັມຂອງພຣະເຈົ້າຈະບໍ່ປ່ຽນແປງ ແລະຕັ້ງໝັ້ນຄົງຢູ່ (ຂໍ້89-91), ໃນຂໍ້ເຫຼົ່ານີ້ເພິ່ນໄດ້ກ່າວໄວ້ວ່າພຣະຄັມພີພຽງພໍສຳລັບທຸກສິ່ງທີ່ເຮົາຈະປະເຊີນ.

ຈົ່ງສັງເກດວ່າ ເຖິງແມ່ນໄດ້ອຸທິດຖວາຍຕົວຕໍ່ຄຳສອນຂອງພຣະເຈົ້າແຕ່ກໍບໍ່ໄດ້ເຮັດໃຫ້ຜູ້ຂຽນເພງສັຣເສີນຫຼີກເວັ້ນຈາກຄວາມຍາກລຳບາກໄດ້. ເຖິງປານນັ້ນຄວາມຍິນດີໃນພຣະທັມພຣະເຈົ້າໄດ້ຊ່ອຍຄຸ້ມຄອງເພິ່ນໃຫ້ຜ່ານພົ້ນຄວາມຍາກລຳບາກໄປໄດ້. ຈົ່ງບັນທຶກ ຄວາມຄືບໜ້າ ແລະຄວາມສັມພັນຣະຫວ່າງຄວາມຍາກລຳບາກ ແລະພຣະທັມຂອງພຣະເຈົ້າດັ່ງລຸ່ມນີ້;

- " ແຕ່ກ່ອນຂ້ານ້ອຍເຄີຍເຮັດຜິດ, ແຕ່ບັດນີ້ຂ້ານ້ອຍເຊື່ອຟັງພຣະທັມຂອງພຣະອົງ " (ຂໍ້ 67).
- " ການລົງໂທດຂ້ານ້ອຍເປັນການດີສຳລັບຂ້ານ້ອຍເພາະວ່າມັນເຮັດໃຫ້ຂ້ານ້ອຍຮຽນຮູ້ເຖິງຂໍ້ຄຳສັ່ງຂອງພຣະອົງ." (ຂໍ້ 71).
- " ຂ້າແດ່ພຣະເຈົ້າ ຂ້ານ້ອຍຮູ້ວ່າການພິພາກສາຂອງພຣະອົງນັ້ນຖືກຕ້ອງແລ້ວ ແລະຮູ້ວ່າຄວາມສັດຊື່ແຫ່ງການລົງໂທດຂອງພຣະອົງ ຊົງໃຫ້ຂ້ານ້ອຍທຸກລຳບາກ " (ຂໍ້ 75).
- " ຖ້າວ່າພຣະທັຍຂອງພຣະອົງບໍ່ເປັນບໍ່ເກີດແຫ່ງຄວາມຍິນດີຂອງຂ້ານ້ອຍແລ້ວ ຂ້ານ້ອຍຈະຕ້ອງຕາຍໃນການລົງໂທດນີ້ " (ຂໍ້ 92).

ພຣະທັມພຣະເຈົ້າເປັນສມໍແຫ່ງວິນຍານຊຶ່ງຈ່ອງດຶງຜູ້ຂຽນເພງສັຣເສີນໄວ້ແໜ້ນ ໃນຖ້າມກາງມໍຣະສຸມທີ່ຮ້າຍແຮງ.

ເພິ່ນໄດ້ສໍາຜັດກັບພຣະຄຸນຊ່ວຍກູ້ພົ້ນ ຍ້ອນເພິ່ນມີການປະພຶດສອດຄ່ອງກັບພຣະທັມພຣະເຈົ້າ. ຄວາມຍິນດີໃນພຣະທັມພຣະເຈົ້າເປັນແຮງບັນດານໃຫ້ເກີດຣິດອໍານາດໃນຊີວິດຂອງເພິ່ນ. ຜູ້ຂຽນເພງສັຣເສີນໄດ້ພົບຄວາມຍິນດີໃນພຣະທັມພຣະເຈົ້າ ຄວາມຍິນດີໄດ້ຊ່ອຍຊູເພິ່ນໃນທຸກສະຖານະການ.

ຄວາມຍິນດີນີ້ຊັກນໍາໃຫ້ຜູ້ຂຽນເພງສັຣເສີນມີຄໍາໝັ້ນສັນຍາວ່າ: *" ຂ້ານ້ອຍຈະບໍ່ລະເລີຍຕໍ່ກົດຣະບຽບຂອງພຣະອົງຈັກເທື່ອ"*. ການຫຼົງລືມພຣະທັມຂອງພຣະເຈົ້າເປັນສິ່ງຜິດຕໍ່ນໍ້າພຣະທັຍພຣະອົງ. ຜົນຕາມມາ, ການຈື່ຈໍາພຣະທັມພຣະເຈົ້າມີຄວາມຕ້ອງການຫລາຍກວ່າການຄິດເຫັນແຕ່ພຽງເທົ່ານັ້ນ. ການຈົດຈໍາໄດ້ລວມທັງການກະທໍາ ແລະການຮັກສາພຣະທັມ.

ດັ່ງອັຄສາວົກ ຢາໂກໂບ ບັນທຶກໄວ້ວ່າ: *"ແຕ່ຜູ້ທີ່ພິຈາຣະນາເບິ່ງໃນພຣະບັນຍັດອັນດີທີ່ສຸດ ຊຶ່ງເປັນພຣະບັນຍັດຊຶ່ງໃຫ້ມີເສຣີພາບ ແລະ ຕັ້ງຢູ່ໃນພຣະທັມບັນຍັດນັ້ນ ຜູ້ນັ້ນບໍ່ເປັນຜູ້ທີ່ໄດ້ຍິນແລ້ວຫຼົງລືມໄປ ແຕ່ໄດ້ເປັນຜູ້ຂັບຕາມ ຜູ້ນັ້ນແຫຼະ, ຈະໄດ້ຮັບຄວາມສຸກໃນກິຈການຂອງຕົນ" (ຢກບ 1:25).*

ຜູ້ຂຽນພຣະທັມເພງສັຣເສີນໂຄຣົບຕໍ່ການຟັງຄວາມວ່າເປັນການສະທ້ອນເຖິງຄວາມສັດຊື່ ບໍ່ແມ່ນຄວາມສົມບູນ. ເພິ່ນໄດ້ບົ່ງບອກໃນໃຈຂອງເພິ່ນວ່າເປັນທີ່ພໍພຣະທັຍພຣະເຈົ້າ ເມື່ອເປັນທີ່ພໍພຣະທັຍພຣະເຈົ້າແລ້ວແມ່ນບົ່ງບອກເຖິງຄວາມປາຖນາຂອງຫົວໃຈຂອງເຮົາ. ຊຶ່ງຈະເປັນຫຼັກຖານທີ່ຈະແຈ້ງ ແລະໜັກແໜ້ນ ວ່າເຮົາດໍາຣົງຊີວິດຢ່າງໃດ?

ຜູ້ຂຽນເພງສັຣເສີນເຮັດຄໍາໝັ້ນສັນຍານີ້ແລ້ວ ເພາະເພິ່ນຮູ້ແລ້ວວ່າຄໍາສັ່ງສອນແລະກົດບັນຍັດໃນພຣະທັມເຮັດໃຫ້ມີຊີວິດ: *"ເພາະສິ່ງເຫຼົ່ານີ້ ພຣະອົງໄດ້ຊ່ອຍໃຫ້ຂ້ານ້ອຍມີຊີວິດຢູ່"*. ຜູ້ຂຽນເພງສັຣເສີນຮູ້ສຶກວ່າເພິ່ນຢູ່ຈຸດທີໃກ້ຕາຍ,ແຕ່ພຣະທັມພຣະເຈົ້າໄດ້ຟື້ນຟູຊີວິດເພິ່ນຄືນໃໝ່ອີກ. ນີ້ແມ່ນຣິດອໍານາດຂອງພຣະທັມ. ຊຶ່ງຈະຊ່ອຍໃຫ້ເຮົາຄືນສູ່ການດໍາຣົງຊີວິດຕາມປົກກະຕິອີກ.

| |
|---|
| ***ທ່ານໄດ້ມີປະສົບການກັບ "ຊີວິດ" ຢ່າງໃດ ຊຶ່ງເປັນຜົນຈາກຄໍາສັ່ງສອນຂອງພຣະເຈົ້າ?*** |

**3. <u>ເພງສັຣເສີນ 119 :94-96</u> :**

*94 ຂ້ານ້ອຍເປັນຄົນຂອງພຣະອົງ ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນພັຍດ້ວຍ ຂ້ານ້ອຍເຄີຍພະຍາຍາມເຮັດຕາມຂໍ້ຄໍາສັ່ງຂອງ*
*ພຣະອົງ 95ຄົນຊົ່ວຮ້າຍຄອຍຖ້າສັງຫານຂ້ານ້ອຍ ແຕ່ຂ້ານ້ອຍໄດ້ຍຶດໝັ້ນໃນກົດຂໍ້ບັນຍັດຂອງພຣະອົງ 96ຂ້ານ້ອຍຮູ້*
*ວ່າບໍ່ມີສິ່ງໃດດີໝົດທຸກຢ່າງ ແຕ່ວ່າຂໍ້ຄໍາສັ່ງຂອງພຣະອົງບໍ່ມີຂອບເຂດຈໍາກັດ."*

ພຣະເຈົ້າຈະປົກປັກຮັກສາບັນດາຜູ້ທີ່ເປັນຂອງພຣະອົງ. ໂດຍຄວາມໝັ້ນໃຈໃນສິ່ງນີ້ ຜູ້ຂຽນເພງສັຣເສີນອ້ອນວອນວ່າ *"ຂ້ານ້ອຍເປັນຄົນຂອງພຣະອົງ ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນພັຍດ້ວຍ." ຄໍາອະທິຖານສະເພາະເພື່ອຄວາມພົ້ນນີ້* ບໍ່ກ່ຽວກັບການອະພັຍບາບ; ແມ່ນການປົດປ່ອຍໃຫ້ພົ້ນຈາກຄວາມທົນທຸກລໍາບາກ.

ຖ້າທ່ານເປັນຄົນຂອງພຣະເຈົ້າ, ບໍ່ພຽງແຕ່ທ່ານຈະໄດ້ຢູ່ສວັນນໍາພຣະອົງເທົ່ານັ້ນ, ແຕ່ພຣະເຈົ້າຈະສະຖິດຢູ່ກັບທ່ານໃນຖ້າມກາງບັນຫາຄວາມຍາກລໍາບາກຂອງທ່ານໃນແຜ່ນດິນໂລກນີ້.

ຜູ້ຂຽນເພງສັຣເສີນໄດ້ໃຫ້ເຫດຜົນສະເພາະວ່າເປັນຫຍັງອົງພຣະຜູ້ເປັນເຈົ້າຈຶ່ງຊ່ອຍເພິ່ນໃຫ້ລອດພົ້ນ:*"ແຕ່ຂ້ານ້ອຍໄດ້ຍຶດໝັ້ນໃນກົດຂໍ້ບັນຍັດຂອງພຣະອົງ."* ຜູ້ຂຽນເພງສັຣເສີນກໍບໍ່ສົມບູນຄືກັນກັບເຮົາ, ແຕ່ເພິ່ນສາມາດເວົ້າໄດ້ດ້ວຍຄວາມເຊື່ອໝັ້ນວ່າເພິ່ນພຍາຍາມສ້າງຊີວິດຂອງເພິ່ນຂຶ້ນເທິງຄໍາສັ່ງສອນຂອງພຣະທັມພຣະເຈົ້າ.

ພວກເຮົາຕ້ອງຈໍາໄວ້ວ່າການຊ່ອຍຂອງພຣະເຈົ້າ ອາດບໍ່ແມ່ນເພື່ອຄວາມສົມບູນຂອງຊີວິດເຮົາ. ຖ້າເປັນດັ່ງນັ້ນ, ພວກເຮົາກໍຈະຕົກຕໍ່າກັນໝົດ! ຂອບຄຸນພຣະເຈົ້າ, ພຣະເຈົ້າຊົງເປັນພຣະເຈົ້າແຫ່ງພຣະຄຸນ; ພຣະອົງປະທານສິ່ງທີ່ເຮົາບໍ່ສົມຄວນຈະໄດ້ຮັບ -ພຣະອົງໄດ້ຊົງຮັບບາບ ແລະຄວາມຕາຍທີ່ເຮົາສົມຄວນໄດ້ຮັບໄປ. ພຣະເຈົ້າຊົງໂຜດຜູ້ທີ່ສແວງຫາພຣະອົງໃຫ້ໄດ້ພົ້ນ.

ເຖິງປານນັ້ນກໍຕາມ, ການເດີນຕາມພຣະເຈົ້າກໍບໍ່ໄດ້ໝາຍຄວາມວ່າພວກເຮົາໄດ້ຖືກປ້ອງກັນຈາກບັນຫາຕ່າງໆ. ຜູ້ຂຽນເພງສັຣເສີນຮູ້ ແລະປະສົບສິ່ງນີ້ມາແລ້ວ:" *ຄົນຊົ່ວຮ້າຍຄອຍຖ້າສັງຫານຂ້ານ້ອຍ, ແຕ່ຂ້ານ້ອຍໄດ້ຍຶດໝັ້ນໃນຂໍ້ບັນຍັດຂອງພຣະອົງ."* ພວກເຮົາຈະປະເຊີນກັບການຕໍ່ຕ້ານ. ແຕ່ເໝືອນກັນກັບຜູ້ຂຽນເພງສັຣເສີນ, ພວກເຮົາຍັງຍຶດໝັ້ນຢູ່ໃນພຣະສັນຍາ ແລະພຣະທັມຂອງພຣະເຈົ້າໄດ້. ແທ້ຈິງ, ເມື່ອຄົນອະທັມມາຕໍ່ຕ້ານເຮົາ, ພວກເຮົາຄວນຍຶດໝັ້ນໃກ້ຊິດພຣະທັມຍິ່ງຂຶ້ນ. ພວກເຮົາບໍ່ຄວນປະໃຫ້ສິ່ງທີ່ຜູ້ອື່ນເຮັດມາປ່ຽນແປງການເຂົ້າສນິດໃນພຣະທັມຂອງພຣະເຈົ້າ.

ໃນເມື່ອຜູ້ຂຽນເພງສັຣເສີນຍຶດໝັ້ນໃນພຣະບັນຍັດຂອງພຣະເຈົ້າ, ເພິ່ນເຂົ້າໃຈວ່າ ພຣະທັມຂອງພຣະເຈົ້າສົມບູນພຽງໃດ: *"ຂ້ານ້ອຍຮູ້ວ່າບໍ່ມີສິ່ງໃດດີພົດທຸກຢ່າງ ແຕ່ວ່າຂໍ້ຄໍາສັ່ງຂອງພຣະອົງບໍ່ມີຂອບເຂດຈໍາກັດ."*ພາສາເຮັບເຣີແປຄໍາວ່າ "ສົມບູນ" ເວົ້າເຖິງຈຸດຈົບສິ່ງທີ່ຕັ້ງໃຈໄວ້ ຫຼື ຜົນສໍາເຣັດຂອງສິ່ງຕ່າງໆ. ແມ່ນແຕ່ສິ່ງທີ່ດີທີ່ສຸດໃນໂລກຍັງມີຂອບເຂດຈໍາກັດ, ບໍ່ສິ້ນສຸດ, ແລະມີມົນທິນ. ທຸກສິ່ງທີ່ໂລກມີໃຫ້ ລ້ວນແຕ່ບໍ່ຄົບຖ້ວນ, ບໍ່ພຽງພໍ. ບໍ່ຄືກັນກັບພຣະທັມພຣະເຈົ້າ. *"ພຣະດໍາຣັດຂອງພຣະອົງບໍ່ມີຂອບເຂດຈໍາກັດ."*ນີ້ແມ່ນເວົ້າໃນລັກສະນະຂອງກະວີວ່າ ພຣະທັມພຣະເຈົ້າສົມບູນ, ຄົບຖ້ວນ, ພຽງພໍ, ບໍ່ຈໍາກັດ, ບໍ່ເສື່ອມສູນ.

ພຣະທັມພຣະເຈົ້າຊອບທັມ ແລະເປັນຈິງ ເພາະວ່າພຣະເຈົ້າເອງເປັນຜູ້ຊອບທັມ ແລະເປັນຈິງ. ພຣະຄັມພີກ່າວຢ່າງຄົບສົມບູນຕໍ່ຄວາມຈໍາເປັນທີ່ເຮົາປະເຊີນເພາະມັນສະທ້ອນເຖິງພຣະລັກສນະ ແລະຣິດອໍານາດຂອງພຣະເຈົ້າ. ເພາະສະນັ້ນ, ພວກເຮົາຈຶ່ງສາມາດເພິ່ງພາໃນຄວາມກ່ຽວພັນ ແລະຄວາມພຽງພໍຂອງພຣະທັມ, ດັ່ງດຽວກັນກັບພວກເຮົາສາມາດເພິ່ງພຣະອົງສເມີ.

| |
|---|
| ***ພວກເຮົາຈະຄໍ້າປະກັນໄດ້ຢ່າງໃດວ່າການຍຶດໝັ້ນໃນພຣະທັມພຣະເຈົ້າຈະພາເຮົາເຕີບໃຫຍ່ໃກ້ຊິດພຣະອົງຍິ່ງຂຶ້ນ?*** |

## ນໍາໃຊ້ໃນຊີວິດ

ພຣະຄັມພີ ມີຄວາມກ່ຽວພັນກັບຊີວິດເຮົາ ແລະຈະກ່ຽວພັນດັ່ງນີ້ສເມີໄປ. ຈົ່ງພິຈາຣະນາຄໍາແນະນໍາຕໍ່ໄປນີ້ເພື່ອຕອບສນອງຕໍ່ຄວາມຈິງໃນອາທິດນີ້:

- **ສຶກສາພຣະຄັມພີທຸກວັນ.** ໃຊ້ບົດແນະນໍາໃນການອ່ານພຣະທັມເຝົ້າດ່ຽວເພື່ອຊ່ວຍທ່ານຕິດພັນກັບພຣະທັມພຣະເຈົ້າແຕ່ລະວັນ. ຕົວຢ່າງ *Opend Windows, Journey (for women), and Standard Firm (for women),ປຶ້ມມານາ. Visit lifeway.com/devotionals* ເພື່ອຂໍ້ມູນເພີ່ມເຕີມ.
- **ຈົດບັນທຶກຢ່າງສມໍ່າສເມີ.** ເລີ້ມຈົດລົງໃນປຶ້ມບັນທຶກເພື່ອບັນທຶກສິ່ງທີ່ທ່ານຮຽນຮູ້ເມື່ອທ່ານສຶກສາພຣະທັມພຣະເຈົ້າ ແລະເພື່ອຕິດຕາມສິ່ງທີ່ທ່ານຄວນທໍາຕາມ. ຈົ່ງແນ່ໃຈວ່າທ່ານກວດເບິ່ງປຶ້ມບັນທຶກຂອງທ່ານຄືນເລື້ອຍໆເພື່ອສໍາຣວດເບິ່ງຄວາມຄືບໜ້າຂອງທ່ານກັບຂໍ້ພຣະທັມ.
- **ເວົ້າສູ່ຄົນອື່ນຟັງ.** ຈົ່ງເປັນຄົນຕັ້ງໃຈກ່ຽວກັບການເວົ້າສູ່ຄົນອື່ນຟັງສິ່ງທີ່ພຣະເຈົ້າສອນທ່ານຜ່ານພຣະທັມພຣະອົງ. ຈົ່ງຕຽມພ້ອມຕອບຄໍາຖາມສເມີເມື່ອມີຄົນຖາມເຖິງ ເຫດຜົນວ່າເປັນຫຍັງທ່ານຈຶ່ງມອບຄວາມຫວັງໃນພຣະຄຣິດ (ເບິ່ງ 1 ປຕ 3:15).

ມີຫຼາຍຄັ້ງໃນປວັດສາດ ເວລາພຣະຄັມພີເປັນຄວາມປາຖນາທາງສັງຄົມ ແມ້ກະທັ້ງ ທາງແຟຊັນ(fashionable). ແຕ່ໃນຂະນະທີ່ສັງຄົມປ່ຽນແປງ ພຣະທັມພຣະເຈົ້າຍັງຕັ້ງໝັ້ນຄົງເໝືອນເດີມ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**